ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດກອງປະຊຸມສະໄໝສາມັນ ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ຄັ້ງທີ III ປະຈຳປີ 2021




ໃນຕອນເຊົ້າຂອງ ວັນທີ 22 ທັນວາ 2021 ຢູ່ທີ່ຫ້ອງປະຊຸມ ກະຊວງແຜນການ ແລະ ການລົງທຶນ ໄດ້ຈັດກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ສະໄໝສາມັນ ຄັ້ງທີ III ປະຈຳປີ 2021 ຜ່ານລະບົບກອງປະຊຸມທາງໄກ ໂດຍການໃຫ້ກຽດເປັນປະທານຂອງ ທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ປະທານ ຄຕຟງ. ພ້ອມນີ້, ກໍມີບັນດາສະມາຊິກຄະນະກຳມະການແຫ່ງຊາດ, ກອງເລຂາ ແລະ ພະນັກງານຂອງກະຊວງກ່ຽວຂ້ອງເຂົ້າຮ່ວມ.

ທີ່ປະຊຸມໄດ້ປຶກສາຫາລືຫຼາຍບັນຫາເປັນຕົ້ນ ສະພາບລວມການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍສະເພາະແມ່ນຄວາມຄືບໜ້າການປະເມີນຮອບດ້ານວຽກງານຕ້ານການຟອກເງິນ ແລະ ສະໜອງທຶນແກ່ການກໍ່ການຮ້າຍຮອບທີ 2 ຂອງ ສປປ ລາວ ຈາກ APG. ພ້ອມນັ້ນ, ກອງປະຊຸມຍັງໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄຕຟງ ຄັ້ງຜ່ານມາ ກ່ຽວກັບການກະກຽມການປະເມີນຮອບດ້ານຂອງ ສປປ ລາວ ທາງດ້ານວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ຄະນະກຳມະການໄດ້ຮັບຮອງເອົາແຜນວຽກບູລິມະສິດຂອງ 4 ພາກສ່ວນ ຄື: 1. ວຽກງານຄຸ້ມຄອງ; 2. ວຽກງານການດຳເນີນຄະດີ; 3. ວຽກງານນິຕິກຳ ແລະ ກົນໄກ ແລະ 4. ວຽກງານເຜີຍແຜ່ ແລະ ເຊື່ອມຊຶມ.

ປັດຈຸບັນ ສປປ ລາວ ໄດ້ສຳເລັດການນຳສົ່ງບົດລາຍງານດ້ານນິຕິກຳ ຮອບທີ 2 ແລະ ບົດລາຍງານດ້ານປະສິດທິຜົນ ຮອບທີ 1 ພ້ອມທັງ ບັນດາກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ຫຼາຍກວ່າ 200 ສະບັບ ໃຫ້ທີມປະເມີນ. ເຊິ່ງ ສປປ ລາວ ພວມຢູ່ໃນຂັ້ນຕອນການຄົ້ນຄວ້າຕອບຄຳຖາມເຈາະຈີ້ມ ຈາກຄະນະປະເມີນສາກົນຕໍ່ກັບບົດລາຍງານດ້ານປະສິດທິຜົນ ທີ ສປປ ລາວ ສົ່ງໃຫ້ໃນຮອບທຳອິດ, ສ່ວນການລົງມາກວດກາຕົວຈິງຂອງສາກົນ ແມ່ນຄາດຄະເນ ຈະຂຶ້ນໃນຕົ້ນປີ 2022 ທີ່ຈະມາເຖິງນີ້.






ໃນໄລຍະການປະເມີນ ສປປ ລາວ ຍັງຕ້ອງໄດ້ສືບເລັ່ງສ້າງ ແລະ ປັບປຸງນິຕິກຳຈຳນວນໜຶ່ງທີ່ຕິດພັນກັບພາກສ່ວນຄຸ້ມຄອງ ກໍ່ຄືຫົວໜ່ວຍທີ່ມີໜ້າທີ່ລາຍງານ, ການກະທຳຜິດຕົ້ນທີ່ຕິດພັນກັບການຟອກເງິນຈຳນວນໜຶ່ງ ແລະ ສືບຕໍ່ຄົ້ນຄວ້າສ້າງແຜນຍຸດທະສາດແຫ່ງຊາດວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປີ 2021-2025 ເພື່ອໃຫ້ ສປປ ລາວ ເປັນບ່ອນອີງ ໃນການຊີ້ແຈງຕໍ່ສາກົນ ເພື່ອຮັບປະກັນບໍ່ໃຫ້ ສປປ ລາວ ຕົກຢູ່ໃນບັນຊີການຕິດຕາມຂອງສາກົນກ່ຽວກັບວຽກງານ AML/CFT ແລະ ຮັບປະກັນໄດ້ກັບວຽກງານ AML/CFT ຂອງ ສປປ ລາວ ໃຫ້ເປັນລະບົບ ແລະ ຍັບເຂົ້າໃກ້ມາດຖານສາກົນເທື່ອລະກ້າວ.

# ຂ່າວ: ສຕຟງ, ພາບ: ຂ່າວສານ ທຫລ

***ໃຊ້ເງິນກີບ ທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ***